ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່ ເລກທີ: 0536 /ທຄຕລ.2026

ນະຄອນຫຼວງວຽງຈັນ, ວັນທີ: 16 FEB 2026

# ໜັງສືແຈ້ງເຊີນ

## ຄັດເລືອກບໍລິສັດກວດສອບເອກະສານລາຍງານການເງິນ ທຄຕລ

## ປະຈໍາປີ 2026-2028

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດທີ່ປຶກສາກວດສອບ ເພື່ອເຂົ້າຮ່ວມສະເໜີລາຄາ ຄ່າບໍລິການກວດສອບເອກະສານລາຍງານການເງິນ ທຄຕລ ປະຈໍາປີ 2026-2028, ໂດຍອະນຸຍາດໃຫ້ທຸກໆບໍລິສັດທີ່ກວດສອບ ທີ່ມີຄຸນນະວຸດທິເໝາະສົມ ແລະ ຄົບເງື່ອນໄຂ ເຂົ້າຮ່ວມ ດັ່ງນີ້:

- ເປັນບໍລິສັດທີ່ໄດ້ມາດຕະຖານ ແລະ ເປັນທີ່ຍອມຮັບຂອງສາກົນ.
- ມີໃບອະນຸຍາດດໍາເນີນທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.
- ໄດ້ຮັບການອະນຸຍາດຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃຫ້ສາມາດກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ເງື່ອນໄຂຂອງບໍລິສັດກວດສອບ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

**ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດບໍລິສັດກວດສອບ, ຕ້ອງມີວິຊາການສະເພາະ ແລະ ດໍາເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2024-2025.
2. ບໍລິສັດກວດສອບທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນຕາມທີ່ລະບຸໄວ້ຂ້າງເທິງສາມາດ ເຂົ້າມາພົວພັນເອົາຂໍ້ມູນ (TOR) ໄດ້ທີ່ ທຄຕລ ສໍານັກງານໃຫຍ່ ຊັ້ນ 4 ຕຶກ C, ຫ້ອງຂາອອກ-ຂາເຂົ້າ, **ເລີ່ມແຕ່ວັນທີ 16/02/2026 ຫາວັນທີ 20/02/2026 ເວລາ 08:30 ໂມງ ຫາເວລາ 15:30 ໂມງ.**
3. ກໍານົດຍື່ນຊອງລາຍລະອຽດໜ້າວຽກ ແລະ ຂໍ້ມູນຕ່າງໆ ແມ່ນໃຫ້ຍື່ນກ່ອນ **ວັນອັງຄານ ວັນທີ 03/03/2026 ເວລາ 15:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

**ເອກະສານຊອງທີ 2 (ປິດຊອງ):**

1. ໃບສະເໜີລາຄາໃຫ້ລະບຸລາຄາ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. **ໃນວັນອັງຄານ ວັນທີ 17/03/2026 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ໃຫ້ບໍລິສັດຜູ້ບໍລິການຕ້ອງຖືຊອງໃບສະເໜີລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າທີ່ໄດ້ຮັບມອບສິດຢ່າງເປັນລາຍລັກອັກສອນເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ດອກຄູນ ຊັ້ນ 5 ຕຶກ C.
3. ບໍລິສັດຜູ້ບໍລິການຕ້ອງລະບຸລາຍລະອຽດ, ເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຂ້າງເທິງນັ້ນ.

4. ບໍລິສັດ ຜູ້ບໍລິການຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ແລະ ໜັງສືຄໍ້າປະກັນດັ່ງກ່າວຕ້ອງອອກໂດຍທະນາຄານພາຍໃນປະເທດລາວ ແລະ ແຍກຊອງຂອງໃຜມັນ ບໍ່ໃຫ້ໃສ່ຊອງດຽວກັນນຳໃບສະເໜີລາຄາ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 17/06/2026) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>**

- ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ບໍລິການທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກບໍ່ໄດ້ກຳນົດເງື່ອນໄຂເລືອກຈາກລາຄາພຽງຢ່າງດຽວ, ແຕ່ຈະອີງໃສ່ປະສົບການ ແລະ ຄວາມຊຳນານງານ ແລະ ອື່ນໆທີ່ກ່ຽວຂ້ອງ.
- ແຊັກ ຫຼື ໜັງສືຄໍ້າປະກັນການປະມູນແມ່ນໃຫ້ແຍກຊອງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ບໍລິສັດຜູ້ບໍລິການທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ຊະນະການປະມູນຕ້ອງໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.

➕ ການຊຳລະຄ່າບໍລິການຈະຈ່າຍເປັນງວດ ອີງຕາມໜ້າວຽກທີ່ສຳເລັດ ພາຍຫຼັງການໃຫ້ບໍລິການແຕ່ລະຄັ້ງ ແລະ ໄດ້ຮັບການຢັ້ງຢືນຈາກ ທຄຕລ.

**<u>ຜູ້ອຳນວຍການ</u>**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຫ່ງ ສປປ ລາວ ນະຄອນ ຫລວງ ວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

**ສອບຖາມຂໍ້ມູນເພີ່ມເຕີມ:**
**ທ່ານ ນ. ມາລິຕາ ຈຳລອງເພັດ ໂທ 020 5679 6265**

## **(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)**

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ ທີ່ເຄີຍບໍລິການໃຫ້ແກ່ ທະນາຄານ | ໜ້າວຽກ | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015 ) | .... ປີ | (ໃຫ້ລະບຸ) | (ຕາມ ທຄຕລ ກຳນົດ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: